ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------------------------

ທະນາຄານແຫ່ງ ສປປ ລາວ ເລກທີ 529/ ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 JUL 2015

**ຂໍ້ຕົກລົງ**

**ກ່ຽວກັບການກຳນົດອັດຕາດອກເບ້ຍຂອງທະນາຄານທຸລະກິດ**

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ, ລົງວັຣທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ, ລົງວັນທີ 26 ທັນວາ 2006;
- ອີງຕາມການຕົກລົງຂອງກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງວັນທີ 16 ກໍລະກົດ 2015;
- ອີງຕາມການຄົ້ນຄ້ວາ ແລະ ນຳສະເໜີຂອງກົມກ່ຽວຂ້ອງ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:

ມາດຕາ 1: ໃຫ້ທະນາຄານທຸລະກິດກຳນົດອັດຕາດດອກເບ້ຍເງິນຝາກສະກຸນເງິນກີບ 12 ເດືອນ ດ້ວຍການນຳໃຊ້ອັດຕາເງິນເຟີ້ສະເລ່ຍຂອງປີຜ່ານມາ ບວກ 2%.

ມາດຕາ 2: ໃຫ້ທະນາຄານທຸລະກິດກຳນົດສ່ວນຕ່າງລະຫວ່າງອັດຕາດອກເບ້ຍເງິນຝາກ-ເງິນກູ້ ສະເລ່ຍຖວ່ງນ້ຳໜັກຜິດດ່ຽງບໍ່ເກີນ 4%.

ມາດຕາ 3: ໃຫ້ກົມນະໂຍບາຍເງິນຕາ ທະນາຄານແຫ່ງ ສປປ ລາວ ແຈ້ງອັດຕາເງິນເຟີ້ສະເລ່ຍຂອງ ປີຜ່ານມາ, ອັດຕາດອກເບ້ຍເງິນຝາກປະຫຍັດ, ເງິນຝາກມີກຳນົດ 3 ເດືອນ, 12 ເດືອນ ແລະ 24 ເດືອນ ສະກຸນເງິນກີບ ແລະ ອອກບົດແນະນຳການຄິດໄລ່ສ່ວນຕ່າງລະຫວ່າງ ອັດຕາດອກເບ້ຍເງິນຝາກ-ເງິນກູ້ ຕາມແຜ່ນທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງຂໍ້ຕົກລົງ ສະບັບນີ້ ໃຫ້ທະນາຄານທຸລະກິດ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ມາດຕາ 4: ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ສະກຸນເງິນກີບທີ່ໄດ້ປະຕິບັດກ້ອນວັນທີ 3 ສິ່ງຫາ 2015 ໃຫ້ປະຕິບັດຕາມເງື່ອນໄຂເກົ່າຈົນກວ່າຈະຄົບກຳນົດ.

ມາດຕາ 5: ໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ, ບັນດາສາຂາພາກທະນາຄານແຫ່ງ ສປປ ລາວ ແລະ ບັນດາທະນາຄານທຸລະກິດ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຕາມໜ້າສທີ່ຂອງຕົນຢ່າງເຂັ້ມງວດ.

ມາດຕາ 6: ຂໍ້ຕົກລົງາສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 3 ສິງຫາ 2015 ເປັນຕົ້ນໄປທຸກຂໍ້ກຳນົດ, ລະບຽບ ແລະ ຄຳສັ່ງຂອງທະນາຄານແຫ່ງ ສປປ ລາວ ທີ່ໃຊ້ໃນເມື່ອກາອນ ຖ້າຂັດກັບຂໍ້ຕົກລົງສະບັບນີ້ ລ້ອນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ດຣ. ສົມພາວ ໄຟສິດ